# ບັດສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19 / MyIR Mobile ຄຳຖາມທີ່ມັກຖາມເລື້ອຍໆ

**ບັດສັກຢາວັກຊີນແມ່ນຫຍັງ**
Vax Card (ບັດສັກຢາວັກຊີນ) ແມ່ນການບັນທຶກຢ່າງເປັນທາງການກ່ຽວກັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ຂອງທ່ານ. ໃນເວລາສັກຢາວັກຊີນ, ທ່ານຄວນໄດ້ຮັບບັດຈາກ CDC (ສູນຄວບຄຸມແລະປ້ອງກັນພະຍາດ)ພ້ອມດ້ວຍວັນທີສັກຢາວັນຊີນປ້ອງກັນພະຍາດ ໂຄວິດ-19 ແລະ ຍີ່ຫໍ້. ຖ້າທ່ານບໍ່ໄດ້ຮັບບັດ ຫຼື ທ່ານເຮັດບັດເສຍ, ມີວິທີອື່ນອີກທີ່ຈະພິສູດວ່າທ່ານໄດ້ຮັບການສັກຢາວັກຊີນແລ້ວ (ເບິ່ງຄຳຖາມ ແລະ ຄຳຕອບຢູ່ລຸ່ມ).

**ແມ່ນຫຍັງທີ່ບັນທຶກໄວ້ຢ່າງເປັນທາງການກ່ຽວກັບການສັກຢາວັກຊີນ?**
ຕໍ່ໄປນີ້ແມ່ນຕົວຢ່າງຂອງການບັນທຶກການສັກຢາວັກຊີນຢ່າງເປັນທາງການ:

- ບັນທຶກການສັກຢາວັກຊີນຕະຫຼອດຊີວິດ/CDC ບັດສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19
- ວັດ Washington Immunization Information System (ລະບົບຂໍ້ມູນການສັກຢາປ້ອງກັນພະຍາດ) ພິມອອກມາ
- MyIR (ພາສາອັງກິດເທົ່ານັ້ນ) ພິມອອກມາ (ບໍ່ວ່າຈະເປັນພາບຖ່າຍໜ້າຈໍ ຫຼື ໃບຢັ້ງຢືນສະຖານະພາບການສັກຢາປ້ອງກັນ)
- My IR Mobile (ພາສາອັງກິດເທົ່ານັ້ນ) ຢັ້ງຢືນກ່ຽວກັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19
- ພິມອອກບັນທຶກທາງການແພດທາງອີເລັກໂທຣນິກທີ່ໄດ້ຮັບການຢັ້ງຢືນ ຈາກຜູ້ໃຫ້ບໍລິການທາງການແພດຂອງທ່ານ

ທ່ານບໍ່ສາມາດເຮັດບັດສັກຢາວັກຊີນດ້ວຍຕົນເອງ, ເພາະມັນຈະບໍ່ຖືກຍອມຮັບເປັນເອກະສານທາງການ. ບັນທຶກທາງການແມ່ນເອກະສານທາງການແພດທີ່ໄດ້ຮັບການຢັ້ງຢືນໃນເວລາສັກຢາວັກຊີນ, ຜ່ານຜູ້ໃຫ້ບໍລິການທາງການແພດຂອງທ່ານ ຫຼື ຜ່ານທາງ MyIR ປະຕູບໍລິການທີ່ລະບຸໄວ້ຂ້າງເທິງ.

**ຂ້າພະເຈົ້າຈະເກັບຮັກສາ ບັດສັກຢາວັກຊີນຂອງຂ້າພະເຈົ້າແນວໃດ?**
ທ່ານຄວນເກັບຮັກສາບັດສັກຢາວັກຊີນປ້ອງກັນພະຍາດຂອງທ່ານໄວ້ໃນບ່ອນປອດໄພ! ໃຫ້ຄິດວ່າສິ່ງນີ້ປຽບເໝືອນໃບຢັ້ງຢືນການເກີດ ຫຼື ປຶ້ມຜ່ານແດນຂອງທ່ານ. ທ່ານສາມາດຖ່າຍຮູບ, ເຮັດສຳເນົາ, ອັດແຂງສຳເນົາ (ແຕ່ບໍ່ແມ່ນຕົ້ນສະບັບ) ຫຼື ດຳເນີນຂັ້ນຕອນອື່ນໆເພື່ອໃຫ້ແນ່ໃຈວ່າທ່ານມີສຳເນົານັ້ນ.

ສຳລັບຄຳແນະນຳເພີ່ມເຕີມກ່ຽວກັບການເກັບຮັກສາບັດສັກຢາວັກຊີນທີ່ຖືກຕ້ອງ, ທ່ານສາມາດແບ່ງປັນເລື່ອງນີ້ກັບຄອບຄົວ ແລະ ໝູ່ເພື່ອນ. ກົດບ່ອນນີ້ເພື່ອເບິ່ງໃບປິວເປັນພາສາຂອງທ່ານ: (ປະຈຸບັນນີ້ມີເປັນ ພາສາ ອັງກິດ ແລະ ພາສາ ສະເປນ).

**ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງເກັບຮັກສາບັດສັກຢາວັກຊີນຂອງຂ້າພະເຈົ້າ?**
ບັດສັກຢາວັກຊີນຂອງທ່ານແມ່ນວິທີທີ່ງ່າຍສຳລັບທ່ານທີ່ຈະສະແດງຫຼັກຖານຢັ້ງຢືນວ່າທ່ານໄດ້ຮັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ແລ້ວ. ທ່ານອາດຈະຕ້ອງສະແດງຫຼັກຖານການສັກຢາວັກຊີນເພື່ອຈະສາມາດເດີນທາງ, ເຂົ້າຮ່ວມໃນງານຕ່າງໆ ແລະ ອາດຈະເພີ່ມຂໍ້ມູນເສີມໃນອະນາຄົດ.

ມີຫຼາຍທຸລະກິດໃນ Washington ໃນປັດຈຸບັນຍັງມີແຮງຈູງໃຈສຳລັບຜູ້ມີຫຼັກຖານຢັ້ງຢືນການສັກວັກຊີນຢ່າງຄົບຖ້ວນ. ນີ້ອາດຈະປະກອບມີສ່ວນຫຼຸດ, ໃຫ້ນັ່ງໄດ້ຕາມສະບາຍ ຫຼື ຕາມບ່ອນທີ່ມັກໃນງານຕ່າງໆ.

**ຂ້າພະເຈົ້າຈະເຮັດແນວໃດຖ້າຂ້າພະເຈົ້າບໍ່ໄດ້ຮັບບັດສັກຢາວັກຊີນ ເມື່ອໄດ້ຮັບການສັກຢາວັກຊີນ?**
ຖ້າທ່ານບໍ່ໄດ້ຮັບບັດສັກຢາວັກຊີນ ເມື່ອທ່ານໄດ້ຮັບຢາວັກຊີນ ປ້ອງກັນພະຍາດ ໂຄວິດ-19, ທ່ານສາມາດຕິດຕໍ່ຜູ້ໃຫ້ບໍລິການສັກຢາວັກຊີນຂອງທ່ານ. ນອກນັ້ນທ່ານຍັງສາມາດເຂົ້າເບິ່ງບັນທຶກການສັກຢາປ້ອງກັນພະຍາດ ໂຄວິດ-19 ຂອງທ່ານທາງອອນໄລນ໌ທີ່ www.MyIRMobile.com (ພາສາອັງກິດເທົ່ານັ້ນ) ແລະ ຕັ້ງບັນຊີໂດຍບໍ່ເສຍຄ່າ.

**ຂ້າພະເຈົ້າຈະເຮັດແນວໃດຖ້າບັດສັກຢາວັກຊີນຂອງພະເຈົ້າເສຍ?**
ຖ້າທ່ານເຮັດບັດສັກຢາວັກຊີນເສຍ,
ທ່ານສາມາດໄດ້ຮັບເອກະສານໃບຢັ້ງຢືນຢ່າງເປັນທາງການກ່ຽວກັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19
ຜ່ານຜູ້ໃຫ້ບໍລິການດ້ານສຸຂະພາບຂອງທ່ານ ຫຼື ໂດຍການຕັ້ງບັນຊີຢູ່ www.MyIRMobile.com (ພາສາອັງກິດເທົ່ານັ້ນ).

**MyIR Mobileແມ່ນຫຍັງ?**
MyIR Mobile ແມ່ນປະຕູຜ່ານທາງອິນເຕີເນັດທີ່ໃຫ້ປະຊາຊົນເຂົ້າເຖິງບັນທຶກການສັກຢາວັກຊີນຂອງລັດຢ່າງເປັນທາງການ.
ທ່ານສາມາດຕັ້ງບັນຊີຢູ່ທີ່ www.MyIRMobile.com (ພາສາອັງກິດເທົ່ານັ້ນ).

ກະລຸນາຈຳໃສ່ໃຈວ່າ MyIR Mobile ໃນປັດຈຸບັນນີ້ຍັງມີຂໍ້ຈຳກັດ ເປັນພາສາອັງກິດເທົ່ານັ້ນ. ສຳລັບການຊ່ວຍເຫຼືອດ້ານພາສາ
ຫຼື ຄວາມຊ່ວຍເຫຼືອເພີ່ມເຕີມເພື່ອໃຫ້ໄດ້ຮັບບັນທຶກຂອງທ່ານ, ທ່ານຍັງສາມາດໂທຫາລັດ Washington Office of
Immunization and Child Profile (ຫ້ອງການສັກຢາປ້ອງກັນພະຍາດ ແລະ ຂໍ້ມູນເດັກນ້ອຍ)
ໃນຊ່ວງເວລາເຮັດວຽກປົກກະຕິທີ່ (360) 236-3595 ຫຼື ຕິດຕໍ່ທາງອີເມວທີ່ waiisrecords@doh.wa.gov.

**ຂ້າພະເຈົ້າຈະໄດ້ຮັບບັນທຶກການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ຂອງລູກຂ້າພະເຈົ້າແນວໃດ?**
ລູກຂອງທ່ານຄວນໄດ້ຮັບບັດສັກຢາວັກຊີນຂອງເຂົາເຈົ້າເອງຈາກ CDC ໃນເວລາສັກຢາວັກຊີນ.
ມັນເປັນຄວາມຄິດທີ່ດີທີ່ທ່ານເກັບບັດນີ້ໄວ້ຢ່າງປອດໄພສຳ ລັບພວກເຂົາຄືກັນກັບທີ່ທ່ານເກັບມ້ຽນຂອງທ່ານເອງ.
ເບິ່ງລາຍຊື່ທາງເລືອກການເກັບຂໍ້ມູນຂ້າງເທິງ.

ຖ້າລູກຂອງທ່ານບໍ່ມີບັດສັກຢາວັກຊີນຈາກ CDC, ທ່ານສາມາດໄດ້ຮັບສຳ ເນົາຢ່າງເປັນທາງການຜ່ານແພດດູແລເດັກ ຫຼື
ຜູ້ໃຫ້ບໍລິການສັກຢາວັກຊີນຂອງພວກເຂົາ. ທ່ານຍັງສາມາດຕັ້ງບັນຊີເປັນຄອບຄົວໄດ້ www.MyIRMobile.com (ພາສາອັງ
ກິດເທົ່ານັ້ນ) ແລະ ເພີ່ມປະຫວັດລູກຂອງທ່ານເຂົ້າໃນບັນຊີຂອງທ່ານເອງ.

**ຈະເປັນແນວໃດຖ້າຂ້າພະເຈົ້າໄດ້ຮັບການສັກຢາປ້ອງກັນຢູ່ນອກລັດ Washington?**
ຖ້າທ່ານບໍ່ໄດ້ຮັບການສັກຢາວັກຊີນ ໃນລັດ Washington,
ບັນທຶກການສັກຢາວັກຊີນຂອງທ່ານອາດຈະບໍ່ປະກົດໃຫ້ເຫັນໃນ MyIR Mobile.
ກະລຸນາກວດສອບໃຫ້ແນ່ໃຈວ່າທ່ານມີຫຼັກຖານຢັ້ງຢືນອື່ນໆກ່ຽວກັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19,
ເຊັ່ນວ່າບັດສັກຢາວັກຊີນຈາກ CDC ຂອງທ່ານ ຫຼື ບັນທຶກທີ່ຢັ້ງຢືນຜ່ານຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານ.

ຖ້າທ່ານບໍ່ໄດ້ຮັບການສັກຢາວັກຊີນຢູ່ໃນສະຫະລັດອາເມລິກາ,
ກະລຸນາເອົາຫຼັກຖານຢັ້ງຢືນການສັກຢາວັກຊີນຈາກປະເທດທີ່ທ່ານສັກຢາວັກຊີນນັ້ນ.

**ຂ້າພເຈົ້າຈະເອົາບັນທຶກການສັກຢາວັກຊີນທັງໝົດສຳ ລັບຂ້າພະເຈົ້າເອງ ຫຼື ຄອບຄົວຂອງຂ້ອຍໄດ້ແນວໃດ (ບໍ່ພຽງແຕ່ການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ເທົ່ານັ້ນ)?**
ສຳລັບບັນຊີລາຍຊື່ເຕັມຂອງບັນທຶກການສັກຢາວັກຊີນສຳ ລັບທ່ານ ຫຼື ສະມາຊິກຄອບຄົວຂອງທ່ານ,
ທ່ານສາມາດຕິດຕໍ່ຜູ້ໃຫ້ບໍລິການດ້ານສຸຂະພາບຂັ້ນຕົ້ນຂອງທ່ານ ຫຼື ຕັ້ງບັນຊີຢູ່ wa.MyIR.net (ພາສາອັງກິດເທົ່ານັ້ນ).

ສຳລັບການຊ່ວຍເຫຼືອດ້ານພາສາ, ຫຼື ຄວາມຊ່ວຍເຫຼືອເພີ່ມເຕີມ ເພື່ອໃຫ້ໄດ້ຮັບບັນທຶກຂອງທ່ານ, ທ່ານຍັງສາມາດໂທຫາລັດ
Washington Office of Immunization and Child Profile (ຫ້ອງການສັກຢາປ້ອງກັນພະຍາດ ແລະ ຂໍ້ມູນເດັກນ້ອຍ)
ໃນຊ່ວງເວລາເຮັດວຽກປົກກະຕິທີ່ 360-236-3595 ຫຼື ຕິດຕໍ່ທາງອີເມວທີ່ waiisrecords@doh.wa.gov.

Washington State Department of Health

DOH 348-819 June 2021

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູ
ໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວ
civil.rights@doh.wa.gov.